- ຜູ້ຊາຍໄດ້ຮັບການສົ່ງໄປຮັບການຝຶກອົບຮົມວຽກເພື່ອໃຫ້ໄດ້ຮັບວຽກງານທີ່ຈ່າຍເງິນດີກວ່າຜູ້ຍິງ.
- ຄາວຕີ້ບໍ່ຕ້ອງການໃຫ້ທ່ານໄດ້ຮັບການຝຶກອົບຮົມ ເນື່ອງຈາກ ເຂົາເຈົ້າເວົ້າວ່າ ທ່ານ “ເຖົ້າເກີນໄປ”
- ທ່ານບໍ່ໄດ້ຮັບອະນຸຍາດໃຫ້ອຸປະຖຳເດັກນ້ອຍໄດ້ ເນື່ອງຈາກທ່ານມີເຊື້ອຊາດທີ່ແຕກຕ່າງ.

## ການຮ້ອງທຸກກ່ຽວກັບການຖືກຈຳແນກ

ຖ້າຫາກ ທ່ານຄິດວ່າ ທ່ານຖືກຈຳແນກ, ທ່ານສາມາດຍື່ນຄຳຮ້ອງທຸກແຍກຕ່າງຫາກຕໍ່ຄາວຕີ້ ຫຼື ຣັຖ, ແລະຣັຖບານກາງໄດ້. ອົງການຂອງຣັຖບານກາງຊຶ່ງທ່ານຕ້ອງຮ້ອງທຸກນັ້ນແມ່ນຂຶ້ນກັບວ່າ ທ່ານກຳລັງຮ້ອງທຸກກ່ຽວກັບໂຄງການໃດ.

ທ່ານສາມາດຍື່ນຄຳຮ້ອງທຸກເລື້ອງການຈຳແນກໄດ້ກັບ:

1. ສຳລັບໂຄງການທັງໝົດທີ່ບໍລິຫານໂດຍພະແນກສະຫວັດດີການຂອງຄາວຕີ້: ຜູ້ປະສານງານດ້ານສິດທິພົນລະເມືອງຂອງ ຄາວຕີ້. ຖາມຫ້ອງການຄາວຕີ້ຂອງທ່ານກ່ຽວກັບ ຊື່, ທີ່ຢູ່ ແລະເບີໂທຣະສັບຂອງຜູ້ປະສານງານດ້ານສິດທິພົນລະເມືອງ. ເຂົາ/ລາວຈະສືບສວນຄຳຮ້ອງທຸກຂອງທ່ານຢ່າງເປັນອິດສະຫຼະ.
2. ຫ້ອງການສິດທິພົນລະເມືອງ
   California Department of Social Services
   744 P Street, MS 8-16-70
   Sacramento, CA 95814
   (916) 654-2107
   (866) 741-6241 (ໂທຣຟຣີ)
3. ສຳລັບໂຄງການ CALFRESH:
   United States Department of Agriculture
   Director, Office of Civil Rights,
   Room 326-W, Whitten Bldg.
   1400 Independence Avenue, S.W.,
   Washington, D.C. 20250-9410
   (202) 720-6382 (ສຽງ ແລະ TTY)
4. ສຳລັບໂຄງການອື່ນໆ ທັງໝົດ:
   Health and Human Services
   Office of Civil Rights
   90 7th Street, Suite 4-100
   San Francisco, CA 94103
   (415) 437-8310 (ສຽງ)
   (415) 437-8311 (TDD)

## ກຳນົດເວລາໃນການດຳເນີນການ

ຖ້າວ່າ ທ່ານເດືອດຮ້ອນຈາກການຖືກຈຳແນກ, ທ່ານຕ້ອງຍື່ນຄຳຮ້ອງທຸກຂອງທ່ານພາຍໃນ 180 ວັນນັບແຕ່ມີການຈຳແນກຈິງ. ຖ້າວ່າ ການຈຳແນກນັ້ນຍັງສົ່ງຜົນກະທົບຕໍ່ລະດັບຜົນປະໂຫຍດການຊ່ວຍເຫຼືອ ແລະການບໍລິການຂອງທ່ານ, ທ່ານຍັງຕ້ອງຂໍໃຫ້ມີການພິຈາລະນາຄະດີໂດຍຣັຖດ້ວຍພາຍໃນ 90 ວັນ. ການສືບສວນການຈຳແນກບໍ່ສາມາດປ່ຽນລະດັບຜົນປະໂຫຍດ ການຊ່ວຍເຫຼືອແລະການບໍລິການຂອງທ່ານໄດ້...ມີແຕ່ການພິຈາລະນາຄະດີໂດຍຣັຖເທົ່ານັ້ນທີ່ສາມາດເຮັດໄດ້.

## ການຈຳກັດສິດທິບາງຢ່າງ

ເຖິງແມ່ນວ່າ ທ່ານມີສິດໃນເລື້ອງການຮັກສາຄວາມເປັນສ່ວນຕົວແລະການຮັກສາຄວາມລັບ, ແຕ່ມີກົດໝາຍບາງຢ່າງທີ່ອະນຸຍາດໃຫ້ມີການຈຳກັດການຍົກເວັ້ນ. ທ່ານສາມາດຖາມຄາວຕີ້ກ່ຽວກັບກົດໝາຍດັ່ງກ່າວໄດ້.

## ຄຳຖາມຕ່າງໆ

ຖ້າວ່າ ທ່ານມີຄຳຖາມໃດໆ ກ່ຽວກັບສິດທິທີ່ບົ່ງໄວ້ໃນທີ່ນີ້, ໃຫ້ໂທຣໄປທີ່ໜ່ວຍສອບຖາມສາທາລະນະ (Public Inquiry Unit): ໂທຣຟຣີ (800) 952-5253. ເບີໂທຣະສັບໂທຣຟຣີ TDD ແມ່ນ (800) 952-8349.

## ໂຄງການຕ່າງໆ ທີ່ຢູ່ພາຍໃຕ້ແຜ່ນພັບນີ້

- Adoption Assistance Program (ໂຄງການຊ່ວຍເຫຼືອກ່ຽວກັບການຮັບເດັກມາລ້ຽງເປັນລູກ) (AAP)
- Adult Protective Services (ການບໍລິການປົກປ້ອງຜູ້ໃຫຍ່)
- Alcohol and Drug Program (ໂຄງການຊ່ວຍເຫຼືອດ້ານເຫຼົ້າແລະຢາເສບຕິດ)
- California Food Assistance Program (ໂຄງການຊ່ວຍເຫຼືອດ້ານອາຫານຂອງຣັຖຄາລິຟໍເນັຍ) (CFAP)
- Medi-Cal
- CalWORKs
- CalWORKs Child Care (ໂຄງການຮັບຝາກເດັກທີ່ກ່ຽວກັບ CalWORKs)
- CalWORKs Welfare-to-Work Program/Services (ການບໍລິການ/ໂຄງການຊ່ວຍເຫຼືອດ້ານວຽກງານຂອງ CalWORKs)
- Cash Assistance Program for Immigrants (ໂຄງການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພົບເຂົ້າເມືອງ)(CAPI)
- Child Welfare Services (ບໍລິການສະຫວັດດີການສຳລັບເດັກ)
- Denti-Cal
- Early & Periodic Screening, Diagnosis, and Treatment (ໂຄງການການກວດກັ່ນຕອງ, ການວິນິດໄສ, ແລະການປິ່ນປົວສຳລັບເດັກແຕ່ຫົວທີ) (EPSDT)
- CalFresh (ໂຄງການບັດຊື້ອາຫານ)
- Foster Care (ການເບິ່ງແຍງອຸປະຖຳ)
- In-Home Support Services (ການບໍລິການຊ່ວຍເຫຼືອໃນເຮືອນ)
- Kinship Guardian Assistance (Kin-GAP)
- Mental Health (ໂຄງການສຸຂະພາບຈິດ)
- Multipurpose Senior Services Program (ໂຄງການບໍລິການຜູ້ສູງອາຍຸແບບຫຼາກຫຼາຍ)(MSSP)
- Personal Care Services Program (ໂຄງການບໍລິການດູແລສ່ວນບຸກຄົນ)(PCSP)
- Refugee Cash Assistance (ໂຄງການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ລີ້ໄພ)
- Social Services (ການບໍລິການສັງຄົມສົງເຄາະ)

STATE OF CALIFORNIA
(ຣັຖຄາລິຟໍເນັຍ)

HEALTH AND HUMAN SERVICES AGENCY
(ອົງການສຸຂະພາບແລະປະຊາສົງເຄາະ)

DEPARTMENT OF SOCIAL SERVICES
(ພະແນກສັງຄົມສົງເຄາະ)

ແຜ່ນພັບນີ້ມີໃຫ້ຈາກຫ້ອງການສະຫວັດດີການປະຈຳເຂດພື້ນທີ່ຂອງທ່ານ ແລະທີ່ www.cdss.ca.gov ໃນພາສາດັ່ງຕໍ່ໄປນີ້:

| | | |
|---|---|---|
| • ອາຣະບິກ | • ຢີ່ປຸ່ນ | • ຣັດເຊັຍ |
| • ອາເມເນັຍ | • ເກົາຫລີ | • ສະເປນ |
| • ກຳປູເຈັຍ | • ລາວ | • ສະເປນແບບຕົວພິມໃຫຍ່ |
| • ຈີນ | • ມ້ຽນ | • ຕາກາລັອກ |
| • ຟາຊີ | • ໂປຕຸເກດ | • ຢູເຄຣນ່ຽນ |
| • ມົ້ງ | • ປັນຈາບ | • ວຽດນາມ |

ນອກຈາກນີ້ ຍັງມີໃຫ້ໃນຕົວພິມໃຫຍ່, ອັກສອນເບຣລ, ແລະຊີດີຟັງ

Pub 13 (Lao) (6/11)

# ສິດທິ ຂອງທ່ານ

## ພາຍໃຕ້ໂຄງການສະຫວັດດີການຕ່າງໆ ຂອງຣັຖຄາລິຟໍເນັຍ



.....ສຳລັບຜູ້ທີ່ຮ້ອງຂໍຮັບ ຫຼື ກຳລັງຮັບການຊ່ວຍເຫຼືອສາທາລະນະໃນຣັຖຄາລິຟໍເນັຍ

ບອກໃຫ້ພວກເຮົາຮູ້ ຖ້າຫາກທ່ານຕ້ອງການຄວາມຊ່ວຍເຫຼືອເນື່ອງຈາກຄວາມພິການ

ຂໍໃຫ້ມີນາຍພາສາມາຊ່ວຍໂດຍບໍ່ເສັຽຄ່າ

## ສິດທິຂອງທ່ານ

ປະຊາຊົນທຸກຄົນແລະທຸກອົງການທີ່ຈັດຫາການຊ່ວຍເຫຼືອສາທາລະນະໃຫ້ທ່ານຕ້ອງເຄົາລົບສິດທິຂອງທ່ານ. ເຂົາເຈົ້າສາມາດ ຊ່ວຍໃຫ້ທ່ານເຂົ້າໃຈ ແລະ ຮ້ອງຂໍຮັບຜົນປະໂຫຍດການຊ່ວຍເຫຼືອແລະການບໍລິການຕ່າງໆ ໄດ້.

- You have the right to an interpreter free of charge
- Usted tiene derecho a un intérprete gratis.
- У вас есть право на бесплатные услуги переводчика
- 您有權免費獲得口譯員服務。
- May karapatan kayong magkaroon ng tagapagsalin na walang bayad.
- Quý vị có quyền được một thông dịch viên miễn phí.
- Koj muaj txoj cai yuav ib tug neeg txhais lus pub dawb.
- لديك الحق في الحصول على مترجم دون أية تكلفة.
- Դուք անվճար թարգմանչի իրավունք ունեք:
- អ្នកមានសិទ្ធិទទួលអ្នកបកប្រែ ដោយមិនបាច់បង់ថ្លៃឡើយ
- 여러분은 무료 통역 서비스를 받을 권리가 있습니다.
- شما حق داشتن مترجم رایگان را دارا می باشید.
- ທ່ານມີສິດຂໍໃຫ້ມີນາຍພາສາ ມາຊ່ວຍແປໂດຍບໍ່ເສັຍຄ່າ
- ਤੁਹਾਨੂੰ ਬਿਨਾਂ ਲਾਗਤ ਦੁਭਾਸ਼ੀਏ ਦਾ ਹੱਕ ਹੈ।
- Ви маєте право на безкоштовні послуги перекладача.
- Você tem direito a um intérprete gratuito.
- あなたには無料で通訳を利用する権利があります。
- Meih maaih leiz duqv mienh tengx meih faan waac kungx.

### ທ່ານມີສິດທີ່ຈະ ...

1. ເຂົ້າໃຈວ່າ ມີຫຍັງເກີດຂຶ້ນແດ່ກັບຄໍາຮ້ອງຂໍຂອງທ່ານ ແລະການຊ່ວຍເຫຼືອ.
2. ໄດ້ຮັບໜັງສືອະທິບາຍ ແລະການອະທິບາຍດ້ວຍວາຈາ ກ່ຽວກັບຄໍາຮ້ອງຂໍຂອງທ່ານ ແລະການຊ່ວຍເຫຼືອ.
3. ໄດ້ຮັບໃບຮັບສໍາລັບເອກະສານໃດໆ ທີ່ທ່ານໄດ້ຍື່ນ.
4. ເບິ່ງບັນທຶກເລື້ອງຂອງທ່ານ.
5. ເບິ່ງຂໍ້ມູນກ່ຽວກັບກົດໝາຍແລະກົດຂໍ້ບັງຄັບຂອງຣັຖ ແລະຄາວຕີ້.
6. ຂໍໃຫ້ຜູ້ພິພາກສາທົບທວນເບິ່ງຄໍາຕັດສິນໃດໆ ຂອງຄາວຕີ້ ກ່ຽວກັບການມີສິດໄດ້ຮັບ, ຜົນປະໂຫຍດ ຫຼື ການບໍລິການ ຂອງທ່ານ.
7. ບໍ່ຕ້ອງຜະເຊີນກັບບັນຫາການຖືກຈໍາແນກໃນການຮັບ ການຊ່ວຍເຫຼືອ ຫຼື ບໍລິການຈາກໂຄງການ.
8. ຍື່ນຄໍາຮ້ອງທຸກກ່ຽວກັບການຖືກຈໍາແນກ.
9. ຮັບການຊ່ວຍເຫຼືອພິເສດຈາກເຈົ້າໜ້າທີ່ຂອງຄາວຕີ້ເພື່ອ ໃຫ້ແນ່ໃຈວ່າ ທ່ານໄດ້ຮັບຜົນປະໂຫຍດການຊ່ວຍເຫຼືອ ຂອງທ່ານ ຖ້າວ່າ ທ່ານພິການ ຫຼື ຂາດສະມັຖພາບຊຶ່ງເຮັດ ໃຫ້ເຂົ້າໃຈຍາກກ່ຽວກັບກົດລະບຽບຂອງໂຄງການ.
10. ຂໍໃຫ້ຮັກສາຂໍ້ມູນຂອງທ່ານເປັນຄວາມລັບ.
11. ໄດ້ຮັບການປະຕິບັດຕໍ່ດ້ວຍມາລະຍາດແລະເຄົາລົບ.

### ຖ້າວ່າ ທ່ານມີບັນຫາກ່ຽວກັບການຊ່ວຍເຫຼືອ ຫຼືບໍລິການຕ່າງໆ ຂອງທ່ານ:

1. ໃຫ້ເກັບຮັກສາບັນທຶກຂໍ້ມູນທັງໝົດຂອງທ່ານ, ເອກະສານ ແລະຂໍ້ມູນຕິດຕໍ່ກັບຄາວຕີ້.
2. ຮັບເອົາໃບຮັບໄວ້ເມື່ອທ່ານຍື່ນສິ່ງເອກະສານໃດໆ.
3. ທ່ານສາມາດພາໃຜຜູ້ໜຶ່ງໄປກັບທ່ານໃນເວລາໄປພົບກັບ ພະນັກງານກໍາກັບການຊ່ວຍເຫຼືອຂອງທ່ານໄດ້.
4. ການຮ້ອງທຸກ. ມີວິທີການຮ້ອງທຸກ 4 ວິທີດັ່ງນີ້:

- *ແບບບໍ່ເປັນທາງການ:* ທ່ານສາມາດຂໍເວົ້າກັບ ຫົວໜ້າຜູ້ໃດໜຶ່ງເພື່ອລົມກ່ຽວກັບບັນຫາຕ່າງໆກັບ ພະນັກງານກໍາກັບການຊ່ວຍເຫຼືອ ຫຼື ກ່ຽວກັບກົດລະບຽບ ແລະສະເໜີການປະຕິບັດກ່ຽວກັບການຊ່ວຍເຫຼືອ ຫຼື ການບໍລິການຂອງທ່ານ.
- *ການພິຈາລະນາຄະດີຂອງຣັຖ:* ຮ້ອງຂໍໃຫ້ ມີການພິຈາລະນາຄະດີໂດຍຣັຖໄດ້ ຖ້າວ່າ ມີບັນຫາກ່ຽວກັບການຊ່ວຍເຫຼືອຫຼື ການບໍລິການຂອງທ່ານ. **ທ່ານຕ້ອງຮ້ອງຂໍເອົາການພິຈາລະນາຄະດີ ພາຍໃນ 90 ວັນ ນັບແຕ່ວັນຕັດສິນຂອງຄາວຕີ້**. ທ່ານອາດສາມາດຍື່ນ ຄໍາຮ້ອງໄດ້ຫຼັງຈາກ 90 ວັນ ຖ້າວ່າ ທ່ານມີເຫດຜົນທີ່ດີ, ເຊັ່ນ ການເຈັບເປັນ ຫຼື ພິການ.
- ຄໍາຮ້ອງທຸກກ່ຽວກັບການຖືກຈໍາແນກ: ຖ້າຫາກທ່ານຮູ້ສຶກ ວ່າ ຄາວຕີ້ໄດ້ຈໍາແນກຕ້ານກັບທ່ານ, ທ່ານສາມາດຮ້ອງ ທຸກເລື້ອງການຖືກຈໍາແນກຕໍ່ຜູ້ປະສານງານສິດທິ ພົນລະເມືອງ (Civil Rights Coordinator) ຂອງຄາວຕີ້ໄດ້ ຫຼື ສົ່ງໄປທີ່ State Civil Rights Bureau ແລະຕໍ່ຣັຖບານກາງໄດ້. ທ່ານຕ້ອງເຮັດແນວນີ້ພາຍໃນ 180 ວັນນັບແຕ່ຖືກຈໍາແນກ. ສໍາລັບຂໍ້ມູນຕື່ມ, ເບິ່ງພາກສ່ວນທີ່ຂຶ້ນຕົ້ນດ້ວຍ "Prohibited Discrimination (ການຫ້າມການຈໍາແນກ)"

ຖ້າຫາກ ການຈໍາແນກສິ່ງຜົນກະທົບຕໍ່ຜົນປະໂຫຍດການຊ່ວຍເຫຼືອ ຫຼື ການບໍລິການຂອງທ່ານ, **ທ່ານຕ້ອງຂໍຮ້ອງເອົາການພິຈາລະນາຄະດີຈາກຣັຖດ້ວຍ** ຖ້າວ່າ ທ່ານຕ້ອງການຄັດຄ້ານ ຄໍາຕັດສິນຂອງຄາວຕີ້ກ່ຽວກັບຜົນປະໂຫຍດ ຫຼື ບໍລິການ ຂອງທ່ານ.

- ການຮ້ອງຮຽນ: ທ່ານສາມາດຍື່ນຄໍາຮ້ອງຮຽນກັບຄາວຕີ້ ໄດ້ ຖ້າວ່າ ທ່ານມີຂັ້ນຕອນການຮ້ອງຮຽນ. **ການຮ້ອງຮຽນນີ້ ບໍ່ສາມາດປົກປ້ອງຜົນປະໂຫຍດຂອງທ່ານໄດ້**ຄືກັນກັບ ການຮ້ອງຂໍເອົາການພິຈາລະນາຄະດີຈາກຣັຖ.

### ການພິຈາລະນາຄະດີຈາກຣັຖ

- ທ່ານສາມາດຮ້ອງຂໍໃຫ້ມີການພິຈາລະນາຄະດີຈາກຣັຖໄດ້ ຍາມໃດກໍໄດ້ທີ່ທ່ານບໍ່ເຫັນດີນໍາການປະຕິບັດຂອງຄາວຕີ້ ກ່ຽວກັບຜົນປະໂຫຍດ ຫຼື ບໍລິການຂອງທ່ານ.
- ນອກຈາກນີ້ ທ່ານຍັງສາມາດຂໍໃຫ້ມີການພິຈາລະນາຄະດີ ຈາກຣັຖໄດ້ ຖ້າວ່າ ຄາວຕີ້ບໍ່ໃຫ້ຜົນປະໂຫຍດການຊ່ວຍ ເຫຼືອຫຼືການບໍລິການຊຶ່ງທ່ານຄິດວ່າທ່ານຄວນໄດ້ຮັບ.
- ການພິຈາລະນາຄະດີຂອງຣັຖແມ່ນພິພາກສາໂດຍ ຜູ້ພິພາກສາກົດໝາຍປົກຄອງຂອງຣັຖ. ຄາວຕີ້ຈະຈັດໃຫ້ມີ ບຸກຄົນໜຶ່ງໄປທີ່ບ່ອນພິຈາລະນາຄະດີເພື່ອອະທິບາຍວ່າ ເປັນຫຍັງເຂົາເຈົ້າຈຶ່ງປະຕິບັດແນວນັ້ນ.
- ການພິຈາລະນາຄະດີຈາກຣັຖບໍ່ແມ່ນການພິຈາລະນາຄະດີ ໃນສານ. ທ່ານມີສິດທີ່ຈະມີຕົວແທນໄປກັບທ່ານໄດ້. ມີ ການບໍລິການດ້ານກົດໝາຍ ໂດຍບໍ່ເສັຽຄ່າໃນທຸກຄາວຕີ້. ການບໍລິການດັ່ງກ່າວບອກໄວ້ຢູ່ດ້ານຫຼັງຂອງແຈ້ງການ ຂອງຄາວຕີ້ຂອງທ່ານ. ທ່ານສາມາດພາພະຍານໄປໄດ້. ທ່ານມີສິດທີ່ຈະຂໍໃຫ້ມີນາຍພາສາມາຊ່ວຍ ໂດຍບໍ່ເສັຽຄ່າ ໄດ້. ຂໍໃຫ້ຖາມຄາວຕີ້ວ່າຕ້ອງເຮັດແນວໃດເພື່ອຂໍເອົາ ນາຍພາສາ.
  - ຖ້າວ່າ ບັນຫາຂອງທ່ານມາຈາກໂຄງການການ ຊ່ວຍເຫຼືອທົ່ວໄປ (General Assistance) ຫຼື ການບັນເທົາທົ່ວໄປ, ທ່ານຕ້ອງຂໍເອົາການພິຈາລະນາ ຄະດີຈາກຄາວຕີ້.
  - ຖ້າວ່າ ບັນຫາຂອງທ່ານແມ່ນກ່ຽວກັບຜົນປະໂຫຍດ ດ້ານປະກັນສັງຄົມ, ທ່ານຕ້ອງຕິດຕໍ່ກັບຫ້ອງການ ປະກັນສັງຄົມ.

### ການສືບຕໍ່ຮັບການຊ່ວຍເຫຼືອ ຫຼື ການບໍລິການຂອງທ່ານໃນລະຫວ່າງການພິຈາລະນາຄະດີ

ຄາວຕີ້ຕ້ອງໃຫ້ແຈ້ງການແກ່ທ່ານຢ່າງໜ້ອຍ 10 ວັນ ກ່ອນຈະມີ ການປ່ຽນການຊ່ວຍເຫຼືອ ຫຼື ບໍລິການຂອງທ່ານ. ຖ້າວ່າ ທ່ານ ຮ້ອງຂໍໃຫ້ມີການພິຈາລະນາຄະດີກ່ອນທີ່ຈະມີການປ່ຽນແປງ, ທ່ານສາມາດຂໍເອົາ "ການຊ່ວຍເຫຼືອໃນລະຫວ່າງລໍຖ້າ (aid paid pending)" ການພິຈາລະນາຄະດີຂອງທ່ານ. ນີ້ໝາຍຄວາມວ່າ ການຊ່ວຍເຫຼືອຂອງທ່ານຍັງຄົງຄືເກົ່າຢູ່ ຈົນກວ່າທ່ານຈະໄດ້ຮັບ ຄໍາຕັດສິນຈາກການພິຈາລະນາຄະດີ.

**ທ່ານຕ້ອງຮ້ອງຂໍໃຫ້ມີການພິຈາລະນາຄະດີກ່ຽວກັບແຈ້ງການອັນໃໝ່ໃດໆ ທີ່ທ່ານໄດ້ຮັບ ຖ້າວ່າ ທ່ານບໍ່ເຫັນດີນໍາ.**

### ວິທີການຮ້ອງຂໍໃຫ້ມີການພິຈາລະນາຄະດີໂດຍຣັຖ

1. ໂທຣະສັບ: ຂໍເອົາການພິຈາລະນາຄະດີໂດຍຣັຖໂດຍຕິດ ຕໍ່ໄປທີ່ CA Department of Social Services (ກົມປະຊາສົງເຄາະຂອງຣັຖຄາລີຟໍເນັຍ) ທີ່ເລກໂທຣ (800) 743-8525 ຫຼື (800) 952-5253
2. ໃຫ້ຕື່ມໜ້າຫຼັງຂອງແຈ້ງການວ່າດ້ວຍການປະຕິບັດ (Notice of Action: NOA) ຂອງທ່ານ ຫຼືສົ່ງຈົດໝາຍ ຮຽກຮ້ອງໄປທີ່:
   CDSS, State Hearing Division
   744 P Street M.S. 09-17-37
   Sacramento, CA 95814

### ການຫ້າມການຈໍາແນກ

ພາຍໃຕ້ກົດໝາຍຂອງຣັຖ, ອົງການປະຊາສົງເຄາະຕ້ອງບໍ່ຈັດ ຫາການຊ່ວຍເຫຼືອ, ຜົນປະໂຫຍດ ຫຼື ການບໍລິການໃຫ້ທ່ານ ຊຶ່ງແຕກຕ່າງຈາກການຊ່ວຍເຫຼືອທີ່ໄດ້ຈັດຫາໃຫ້ແກ່ຄົນອື່ນໆ ໂດຍອີງໃສ່

*ເຊື້ອຊາດ, ສີຜິວ, ຊາດກໍາເນີດ (ລວມເຖິງດ້ານພາສາ), ຊົນເຜົ່າ, ອາຍຸ, ຄວາມພິການ, ເພດ, ຄວາມມັກຊອບທາງເພດ, ການເຂົ້າຮ່ວມທາງການເມືອງ, ສະຖານະການແຕ່ງງານ, ຫຼື ຫຸ້ນສ່ວນໃນຄອບຄົວ*

ກົດໝາຍຣັຖບານກາງຍັງຫ້າມບໍ່ໃຫ້ມີການຈໍາແນກໃນຫຼາຍ ປະເດັນ, ເຖິງວ່າບໍ່ແມ່ນທັງໝົດ, ອີງຕາມລາຍການທີ່ບົ່ງໄວ້ຂ້າງ ເທິງ. ນອກຈາກນີ້ ກົດໝາຍຣັຖບານກາງຍັງຫ້າມ:

1. ການຊັກຊ້າ ຫຼື ປະຕິເສດການຈັດຫາບ່ອນຢູ່ໃຫ້ແກ່ເດັກ ເພື່ອການອຸປະຖໍາ ຫຼື ເພື່ອເຂົ້າຢູ່ໃນການເບິ່ງແຍງອຸປະຖໍາ ໂດຍອີງໃສ່ ເຊື້ອຊາດ, ສີຜິວ ຫຼື ຊາດກໍາເນີດຂອງພໍ່ແມ່ຜູ້ທີ່ ອຸປະຖໍາ, ຫຼື ເດັກ;
2. ປະຕິເສດທີ່ຈະໃຫ້ໂອກາດແກ່ບຸກຄົນໃດໆ ທີ່ຂໍເປັນພໍ່ແມ່ບຸນທໍາ ໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼື ຊາດກໍາເນີດຂອງບຸກຄົນ ຫຼື ເດັກທີ່ກ່ຽວຂ້ອງ.

### ຕົວຢ່າງຂອງການຈໍາແນກ

- ຄາວຕີ້ບໍ່ຈັດຫານາຍພາສາໃຫ້ທ່ານຟຣີ.
- ພະນັກງານກໍາກັບການຊ່ວຍເຫຼືອບອກກຸ່ມຊົນເຜົ່າບາງກຸ່ມ ຕື່ມກ່ຽວກັບໂຄງການ ແລະການບໍລິການອື່ນໆ ຫຼາຍກວ່າ ທີ່ຈະບອກຊົນເຜົ່າກຸ່ມອື່ນໆ.
- ຄາວຕີ້ຈະບໍ່ຊ່ວຍທ່ານໃນການຂໍເອົາເທັບຟັງກ່ຽວກັບ ແນວທາງຂອງໂຄງການເພື່ອຊ່ວຍທ່ານທີ່ພິການ ຊຶ່ງເຮັດໃຫ້ທ່ານ ລໍາບາກໃນການອ່ານ.
- ພະນັກງານກໍາກັບການຊ່ວຍເຫຼືອຮູ້ວ່າທ່ານນັບຖື ສາສະໜາຫຍັງ ຫຼື ແນວທາງການເມືອງຂອງທ່ານ ຈາກ ນັ້ນກໍປະຕິບັດຕໍ່ທ່ານຢ່າງແຕກຕ່າງ.
- ທ່ານບໍ່ສາມາດໄປບ່ອນນັດໝາຍໄດ້ເນື່ອງຈາກອາຄານ ຂອງຄາວຕີ້ບໍ່ມີລິຟ.
- ທ່ານບໍ່ສາມາດນັ່ງຣົຖລໍ້ຂອງທ່ານໄປທີ່ຫ້ອງກວດ, ຫ້ອງສໍາພາດ ຫຼື ຫ້ອງນໍ້າໄດ້.